ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ພິທີມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2021 ໃຫ້ແກ່ໜ່ວຍພັກກົມກວດກາພາຍໃນ, ກົມນະໂຍບາຍເງິນຕາ ແລະ ກົມບໍລິການທະນາຄານ





ໃນວັນທີ 24 ມິຖຸນາ 2022 ຜ່ານມານີ້, ທີ່ຫ້ອງປະຊຸມຊັ້ນ IV ທຫລ ໄດ້ຈັດພິທີມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2021 ໃຫ້ແກ່ 3 ໜ່ວຍພັກຄື: ໜ່ວຍພັກກົມກວດກາພາຍໃນ, ໜ່ວຍພັກກົມນະໂຍບາຍເງິນຕາ ແລະ ໜ່ວຍພັກກົມບໍລິການທະນາຄານ. ພາຍໃຕ້ການເປັນປະທານຂອງ ສະຫາຍ ນ. ວັດທະນາ ດາລາລອຍ, ກຳມະການປະຈຳພັກ, ປະທານຄະນະກວດກາພັກ ທຫລ, ຮອງຜູ້ວ່າການ ທຫລ, ເຊິ່ງມີຄະນະໜ່ວຍພັກ ແລະ ສະມາຊິກພັກຈາກກົມກ່ຽວຂ້ອງ ແລະ ຕົວແທນຈາກໜ່ວຍພັກອ້ອມຂ້າງເຂົ້າຮ່ວມຢ່າງພ້ອມພຽງ.





ໃນພິທີ, ສະຫາຍ ນ. ຂັນແກ້ວ ຫລ້າມະນີເງິາ, ກຳມະການປະຈຳພັກ, ເລຂາໜ່ວຍພັກກົມນະໂຍບາຍເງິນຕາ ໄດ້ຕາງໜ້າຄະນະໜ່ວຍພັກທັງ 3 ໜ່ວຍຂຶ້ນກ່າວລາຍງານບົດສະຫຼຸບຕີລາຄາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2021 ໂດຍສັງເຂບ, ເນັ້ນໃຫ້ເຫັນເຖິງຜົນງານການຊີ້ນຳ-ນຳພາການປະຕິບັດໜ້າທີ່ການເມືອງຂອງທັງ 3 ໜ່ວຍພັກທີ່ຍາດມາໄດ້ໃນໄລຍະປີ 2021 ໂດຍສະເພາະຜົນສຳເລັດໃນການກວດກາຊຸກຍູ້ການເຄື່ອນໄຫວວຽກງານຂອງບັນດາກົມ-ທຽບເທົ່າ ແລະ ສາຂາ ທຫລ ປະຈຳພາກ, ຜົນສຳເລັດການປະຕິບັດແຜນງານໂຄງການ 5 ປີ ຂອງທັງ 3 ໜ່ວຍພັກ ແລະ ຜົນສຳເລັດໃນວຽກງານການຮັກສາສະຖຽນລະພາບເງິນຕາແຫ່ງຊາດ, ການປັບປຸງ-ສ້າງນິຕິກຳຄຸ້ມຄອງມະຫາພາກ ແລະ ການພັດທະນາຄຸ້ມຄອງຕະຫຼາດເງິນ ແລະ ອື່ນໆ.

ຈາກນັ້ນ, ສະຫາຍ ປະທານ ກໍໄດ້ໃຫ້ກຽດໂອ້ລົມຕໍ່ພິທີດັ່ງກ່າວ, ຊຶ່ງທ່ານໄດ້ຕີລາຄາສູງຕໍ່ຜົນງານທີ່ຍາດມາໄດ້ຂອງທັງ 3 ໜ່ວຍພັກວ່າ ຍ້ອນຄວາມຮັບຜິດຊອບສູງໃນການຊີ້ນຳ-ນຳພາການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງໜ່ວຍພັກ. ຄຽງຄູ່ກັນນັ້ນ, ກໍໄດ້ຮຽກຮ້ອງມາຍັງບັນດາສະຫາຍຄະນະໜ່ວຍພັກ, ສະມາຊິກພັກ ກໍຄື

ພະນັກງານທັງໝົດໃນ 3 ໜ່ວຍພັກຈົ່ງພ້ອມກັນ ເຊີດຊູຄວາມເອົາໃຈໃສ່ໃນການເສີມຂະຫຍາຍມູນເຊື້ອອັນດີງາມ ກໍຄືຜົນງານຂອງຕົນທີ່ຍາດໄດ້ໃນໄລຍະຜ່ານມາໃຫ້ເຕີບໃຫຍ່ເຂັ້ມແຂງກວ່າເກົ່າ ແລະ ເພີ່ມທະວີຍົກສູງສະຕິ, ຄວາມຮັບຜິດຊອບ, ສູ້ຊົນບຸກບືນຜ່ານຜ່າທຸກອຸປະສັກ ແລະ ຄວາມຫຍຸ້ງຍາກຕ່າງໆ ແລະ ພ້ອມກັນຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນທີ່ຖືກມອບໝາຍດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສໍາເລັດ ໂດຍສະເພາະວຽກງານກວດກາໃຫ້ເອົາໃຈໃສ່ຍົກສູງຄຸນນະພາບ ແລະ ຮັບປະກັນໃນການເປັນເສນາທິການດ້ານການກວດກາໃຫ້ແກ່ຄະນະພັກ-ຄະນະຜູ້ອໍານວຍການ ໂດຍສະເພາະການຕິດຕາມກວດກາວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງໃນຂົງເຂດທະນາຄານ ເພື່ອສະກັດກັ້ນປະກົດການຫຍໍ້ທໍ້ທີ່ອາດຈະເກີດຂຶ້ນໃນຕໍ່ໜ້າ,  ຕິດຕາມຊຸກຍູ້ວຽກງານປະເມີນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ການແກ້ໄຂບັນດາຂໍ້ຄົງຄ້າງຂອງບັນດາຮາກຖານພັກ-ໜ່ວຍພັກ ລວມທັງ ຄົ້ນຄວ້າສ້າງນະໂຍບາຍວຽກງານກວດກາ ແລະ ຫັນວຽກງານກວດກາໄປສູ່ລະບົບທັນສະໄໝ; ວຽກງານຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດນະໂຍບາຍເງິນຕາ ແລະນະໂຍບາຍອັດຕາແລກປ່ຽນໃຫ້ມີຄວາມແທດເໝາະສອດຄ່ອງກັບສະພາບເສດຖະກິດ-ເງິນຕາຫຼາຍຂຶ້ນ, ປັບປຸງກົນໄກການຄຸ້ມຄອງຮ້ານແລກປ່ຽນ ແລະ ເງິນຕາຕ່າງປະເທດໃຫ້ເປັນລະບົບຄົບຊຸດ ໂດຍສະເພາະບັນດານິຕິກໍາລຸ່ມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ. ນອກຈາກນີ້ຕ້ອງໄດ້ເອົາໃຈໃສ່ພັດທະນາຄຸ້ມຄອງລະບົບຕະຫຼາດເງິນໃຫ້ມີຄວາມຄ່ອງຕົວ ແລະ ແທດເໝາະສອດຄ່ອງກັບສະພາບການພັດທະນາເສດຖະກິດ-ເງິນຕາໃນໄລຍະໃໝ່.

**ຂ່າວ: ກົມ ກວດກາ**

**ພາບ: ສົມພິດ ທໍາມະວົງ**

*ຢູ່ເມືອງລາວ ໃຊ້ເງິນກີບລາວ*